ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ອົງການໄອຍະການປະຊາຊົນສູງສຸດ

ກົມການເງິນ

ເລກທີ ..167../ກກງ.

ນະຄອນຫຼວງວຽງຈັນ, ວັນທີ..12.../..09../2025

## ໜັງສືແຈ້ງເຊີນປະມູນ

1. ກົມການເງິນ ອົງການໄອຍະການປະຊາຊົນສູງສຸດ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸທິເໝາະສົມ ເຂົ້າຍື່ນຊອງປະມູນ ສໍາລັບການກໍ່ສ້າງ ຫ້ອງການ ອົງການໄອຍະການປະຊາຊົນແຂວງ ໄຊຍະບູລີ, ໄລຍະການກໍ່ສ້າງ 24 ເດືອນ.

2. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກໍານົດໄວ້ຢູ່ໃນ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸທິເໝາະສົມ, ມີໃບອະນຸຍາດດໍາເນີນທຸລະກິດຖືກຕ້ອງຕາມກົດໝາຍ ທີ່ກ່ຽວພັນກັບການກໍ່ສ້າງດັ່ງກ່າວ.

4. ບໍລິສັດທີ່ມີຄຸນນະວຸທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນ ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ **ກົມການເງິນ ອົງການໄອຍະການປະຊາຊົນສູງສຸດ ຊັ້ນ G** ໃນໂມງລັດຖະການ.

5. ບໍລິສັດໃດ ທີ່ຕ້ອງການຊື້ເອກະສານປະມູນຄົບຊຸດເປັນພາສາລາວ ຕ້ອງຍື່ນໜັງສືສະເໜີຫາ ທີ່ຢູ່ຂ້າງລຸ່ມນີ້, ເລີ່ມແຕ່ ວັນທີ 12/9/2025 ເປັນຕົ້ນໄປ, ໃນລາຄາ: 5,000,000 ກີບ/ຊອງ, ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ. ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ.

6. ຊອງປະມູນຕ້ອງສົ່ງທີ່ຢູ່ລຸ່ມນີ້, ໃນເວລາ ຫລື ກ່ອນເວລາ: 9:30 ໂມງ ໃນວັນທີ 13/10/2025, ທີ່ຫ້ອງປະຊຸມຊັ້ນ **3** ອົງການໄອຍະການປະຊາຊົນສູງສຸດ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ, ຊອງປະມູນທຸກໆ ຊອງຈະໄດ້ເປີດໃນເວລາ : 9:40 ໂມງ, ທີ່ຫ້ອງປະຊຸມຊັ້ນ III ອົງການໄອຍະການປະຊາຊົນສູງສຸດ, ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນໍາຕາມສະຖານທີ່ຂ້າງລຸ່ມນີ້.

7. ທຸກໆຊອງປະມູນຕ້ອງໄດ້ ມີໜັງສືຄໍ້າປະກັນການປະມູນດ້ວຍເງິນສົດ ຫລື ໜັງສືຄໍ້າປະກັນການປະມູນຈາກທະນາຄານ ຢ່າງໜ້ອຍບໍ່ໃຫ້ຫລຸດ 2% ຂອງລາຄາສະເໜີເຂົ້າປະມູນ.

8. ທີ່ຢູ່ ອົງການໄອຍະການປະຊາຊົນສູງສຸດ, ບ້ານ ບຶງຂະຫຍອງ ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ຖະໜົນທ່າເດື່ອ (ພະແນກແຜນການ ກົມການເງິນ ຊັ້ນ G ເບີໂທ 021 316251).

ແທນ ຫົວໜ້າກົມ

ອານຸສອນ ວິດາວົງ

ໝາຍເຫດ:

ລາຍລະອຽດສອບຖາມເພີ່ມເຕີມ ພະແນກແຜນການ ກົມການເງິນ

020 22474747 ກິດຕິພັນ ພິມມາ ຫົວໜ້າພະແນກແຜນການ

020 55961646 ສີລິພອນ ສາວະລີ ຮອງຫົວໜ້າພະແນກແຜນການ